**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 0316 /ຜ-ຟຝລ

ນະຄອນຫຼວງວຽງຈັນ, ວັນທີ 10/02/2021

# ໃບລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖື,

ເລື່ອງ: ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ສະໄໝວິສາມັນ ຄັ້ງທີ 1/2021.

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("**ບໍລິສັດ**") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສະພາບໍລິຫານສະໄໝວິສາມັນ ຄັ້ງທີ 1/2021 ວັນທີ 09 ກຸມພາ 2021, ມີລາຍລະອຽດລຸ່ມນີ້:

1. ອະນຸມັດແຜນການຊອກຫາແຫຼ່ງທຶນ ໂດຍຜ່ານການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ ຈຳນວນເງິນປະມານບໍ່ເກີນ 500 ລ້ານໂດລາສະຫະລັດ ເພື່ອລົງທຶນໃນການຂະຫຍາຍທຸລະກິດ, ການຊຳລະຄືນໜີ້ສິນເດີມທີ່ຈະຄົບກຳນົດ (Refinance ລວມທັງ ຮຸ້ນກູ້ ແລະ/ຫຼື ເງິນກູ້), ຄ່າໃຊ້ຈ່າຍທົ່ວໄປໃນການດຳເນີນທຸລະກິດຂອງບໍລິສັດ ລວມເຖິງເງິນທຶນໝູນວຽນຂອງບໍລິສັດ.

ແລະ ສະເໜີກອງປະຊຸມວິສາມັນຜູ້ຖືຮຸ້ນມອບອຳນາດໃຫ້ ສະພາບໍລິຫານຂອງບໍລິສັດ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍ ຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການພິຈາລະນາ ແລະ ດຳເນີນວຽກງານ ກ່ຽວກັບການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ; ມີລາຍລະອຽດດັ່ງຕໍ່ໄປນີ້:

(1). ພິຈາລະນາ ແລະ ກຳນົດວົງເງິນທີ່ຈະອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມຈາກສະຖາບັນການເງິນ, ລາຍລະອຽດທີ່ກ່ຽວຂ້ອງ, ດັດແກ້, ເພີ່ມເຕີມ, ຕົກລົງ, ລົງນາມ, ສົ່ງມອບເອກະສານ ແລະ/ຫຼື ຂໍ້ມູນຕ່າງໆອັນຈຳເປັນ ແລະກ່ຽວເນື່ອງກັບການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມຈາກສະຖາບັນການເງິນ ລວມເຖິງແຕ່ບໍ່ຈຳກັດພຽງ ການເປີດເຜີຍຂໍ້ມູນໃດໜຶ່ງທີ່ກ່ຽວຂ້ອງ, ການຕິດຕໍ່, ການໃຫ້ຂໍ້ຄວາມ, ຂໍ້ມູນແກ່ ໜ່ວຍງານລັດ ແລະ/ຫຼື ອົງການລັດຕ່າງໆ ທີ່ກ່ຽວຂ້ອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວ ການກະກຽມ, ດັດແກ້, ເພີ່ມເຕີມ ແລະ/ຫຼື ປ່ຽນແປງຂໍ້ມູນທີ່ກ່ຽວຂ້ອງທີ່ຈະຕ້ອງເປີດເຜີຍ ລວມເຖິງການດຳເນີນການໃດໜຶ່ງທີ່ຈຳເປັນ ແລະກ່ຽວເນື່ອງກັບການດຳເນີນການດັ່ງກ່າວໄດ້ທຸກຢ່າງຈົນສຳເລັດ, ລວມທັງໃຫ້ມີອຳນາດໃນການແຕ່ງຕັ້ງ ແລະ/ຫຼື ຖອດຖອນ ຜູ້ຮັບມອບອຳນາດໃນການດຳເນີນການໃດໜຶ່ງດັ່ງກ່າວຂ້າງເທິງນີ້;

(2). ພິຈາລະນາ ແລະ ກຳນົດລາຍລະອຽດ ເງື່ອນໄຂຕ່າງໆ ທີ່ຈຳເປັນ ຫຼື ກ່ຽວກັບການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມຈາກສະຖາບັນການເງິນ ດັ່ງກ່າວໄດ້ທຸກປະການ ແລະ/ຫຼື ມີອຳນາດໃນດັດແກ້ ຫຼື ປ່ຽນແປງຂໍ້ມູນໃດໜຶ່ງ ພາຍໃຕ້ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ເຊັ່ນ: ປະເພດຮຸ້ນກູ້, ໄລຍະເວລາ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392

ໂທລະສັບ: (856-21) 316 142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la. ເວັບໄຊທ໌: www.edlgen.com.la

ການກູ້ຢືມເງິນ ແລະ/ຫຼື ອາຍຸຂອງຮຸ້ນກູ້, ມູນຄ່າການກູ້ຢືມເງິນ ແລະ/ຫຼື ມູນຄ່າຮຸ້ນກູ້, ອັດຕາດອກເບ້ຍ, ສະກຸນເງິນ, ໄລຍະເວລາໃນການອອກ ແລະສະເໜີຂາຍ, ວິທີການຈັດສັນ, ວິທີການສະເໜີຂາຍ ລາຍລະອຽດ ການສະເໜີຂາຍ, ລວມເຖິງແຕ່ບໍ່ຈຳກັດພຽງການແຕ່ງຕັ້ງທີ່ປຶກສາ, ການວ່າຈ້າງຜູ້ຈັດຈຳໜ່າຍ ແລະ ຜູ້ຮັບປະກັນການຂາຍຮຸ້ນ, ການປະຕິບັດ, ການລົງນາມ, ການສົ່ງມອບຄຳຮ້ອງຕ່າງໆ, ສັນຍາ ແລະ/ຫຼື ເອກະສານຕ່າງໆ ກັບສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ໜ່ວຍງານລັດຖະບານ ແລະ/ຫຼື ອົງການຂອງລັດ ຫຼື ບຸກຄົນໃດ ທີ່ກ່ຽວຂ້ອງກັບການດຳເນີນການດັ່ງກ່າວໄດ້ທຸກປະການ.

ແລະ ໃຫ້ນຳເລື່ອງນີ້ສະເໜີຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2021 ເພື່ອພິຈາລະນາອະນຸມັດ.

2. ກຳນົດວັນ-ເວລາ, ສະຖານທີ່ ແລະ ກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2021 ແລະ ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ດັ່ງນີ້:

❖ **ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2021:**

1) ສະຖານທີ່: ຫ້ອງປະຊຸມຊັ້ນ 1 ສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ.
2) ວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມ: ວັນທີ **19/02/2021**.
3) ວັນ-ເວລາປະຊຸມ: ວັນທີ **03/03/2021** ເວລາ 13:30-15:00 ໂມງ ຜູ້ຖືຮຸ້ນລົງທະບຽນ, ເວລາ 15:00-17:00ໂມງ ປະຊຸມວິສາມັນຜູ້ຖືຮຸ້ນ.

❖ **ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020:**

1) ສະຖານທີ່: ຫ້ອງປະຊຸມຊັ້ນ 1 ສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ.
2) ວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມ: ວັນທີ **10/03/2021**.
3) ວັນ-ເວລາປະຊຸມ: ວັນທີ **09/04/2021** ເວລາ 13:30-15:00 ໂມງ ຜູ້ຖືຮຸ້ນລົງທະບຽນ, ເວລາ 15:00-17:00ໂມງ ປະຊຸມສາມັນຜູ້ຖືຮຸ້ນ.

ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກຜູ້ອຳນວຍການໃຫຍ່ ເປັນຜູ້ມີອຳນາດພາຍໃຕ້ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃນການແກ້ໄຂວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມ ແລະ ເປັນຜູ້ມີອຳນາດພາຍໃຕ້ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງໃນການແກ້ໄຂ ວັນ-ເວລາ ແລະ ສະຖານທີ່ປະຊຸມຜູ້ຖືຮຸ້ນດັ່ງກ່າວ.

3. ກຳນົດວາລະກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2021, ມີລາຍລະອຽດດັ່ງນີ້:

ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020.

ວາລະທີ 2: ພິຈາລະນາ ແລະ ອະນຸມັດການຊອກຫາແຫຼ່ງທຶນ ໂດຍຜ່ານການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ.

ດັ່ງນັ້ນ ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,

**ກຳມະການສະພາບໍລິຫານ/ຜູ້ອຳນວຍການໃຫຍ່**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ດວງສີ ພາຣາຍົກ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392
ໂທລະສັບ: (856-21) 316 142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la